

## ຄວາມສາມັກຄີພິເສດ

# ລາວ-ຫວຽດນາມ

## ຄວາມຊົງຈຳ

ພັນຕີ ຊຽງສົມ ກຸນລະວົງ

ຈັດການກວດສອບ ແລະ ດຳເນີນການໂດຍ

ຄະນະໂຄສະນາອົບຮົມສູນກາງພັກປະຊາຊົນປະຕິວັດລາວ

ສຳນັກພິມນັກປະພັນລາວ

2012

ລາງວັນຊະນະເລີດ

ບັ້ນກວດສອບບົດບັນທຶກ ເພື່ອສະເຫຼີມສະຫຼອງປີສາມັກຄີ

ລາວ-ຫວຽດນາມ 2012




# ຄວາມສາມັກຄີພິເສດ

# ລາວ-ຫວຽດນາມ

## ຄວາມຊົງຈຳ

ພົບຕີ ຊຽງສົມ ກຸບລະວົງ

ຈັດການກວດສອບ ແລະ ດຳເນີນການໂດຍ

ຄະນະໂຄສະນາອົບຮົມສູນກາງພັກ ປະຊາຊົນປະຕິວັດລາວ

ຈັດພິມໂດຍ

ສຳນັກພິມສະມາຄົມນັກປະພັນລາວ

2012

# ຄະນະຈັດທຳ

- ຊີ້ນຳລວມ : **ເຈືອງ ສິມບູນຂັນ**
  ຫົວໜ້າຄະນະໂຄສະນາ ອົບຮົມສູນກາງພັກ ປະຊາຊົນປະຕິວັດລາວ
- ບັນນາທິການ : **ພົວລາວັນ ຫຼວງວັນນາ**
  **ສຸບັນ ຫຼວງລາດ**
  **ໂອທອງ ຄຳອິນຊູ**
  **ຄຳວິສັນ ແກ້ວສຸວັນ**
- ອອກແບບ-ຈັດໜ້າ : **ທອງເດືອນ ທຳມະວົງ**
- ຕີພິມ : **ວິລັດ ກຸນລະວົງ**
- ບໍລິຫານ : **ສົມພອນ ທຸມມາວົງ**


**ສຳນັກພິມ ນັກປະພັນລາວ**
ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
ໂທລະສັບ/ແຟກ: 856-21-219871
Emaill: hong-writer@hotmaill.com
ພິມຄັ້ງແຮກ : 2012 ຈຳນວນ 2.000 ເຫຼັ້ມ
ທະບຽນພິມ : 472 ພຈ 04122012

**ຂໍ້ມູນທາງບັນນານຸກົມ ຂອງຫໍສະມຸດແຫ່ງຊາດ**

ນັກປະພັນລາວ
ຄວາມສາມັກຄີພິເສດ ລາວ-ຫວຽດນາມ/ຊຽງສົມ ກຸນລະວົງ.--ວຽງຈັນ: ສຳນັກພິມນັກປະພັນລາວ, 2012
122 ໜ້າ: ພາບປະກອບສີ; 15X21 ຊມ (ບັ້ນກວດສອບບົດບັນທຶກ ເພື່ອສະເຫຼີມສະຫຼອງປີສາມັກຄີ ລາວ-ຫວຽດນາມ 2012)
1. ບົດຄວາມຊົງຈຳ. I. ພົວລາວັນ ຫຼວງວັນນາ, ສຸບັນ ຫຼວງລາດ, ໂອທອງ ຄຳອິນຊູ, ຄຳວິສັນ ແກ້ວສຸວັນ ບັນນາທິການ. II. ຊື່ເລື່ອງ
808.883 --dc21
ISBN 978-9932-00-045-6

# ຄຳນຳ
# ຂອງສຳນັກພິມນັກປະພັນລາວ

ທ່ານຜູ້ອ່ານຄົງເຄີຍໄດ້ຍິນເລື້ອຍໆ ຄຳວ່າ "ຄວາມສາມັກຄີພິເສດລາວ-ຫວຽດນາມ" ແລະ ບາງທີທ່ານອາດຈະຍັງຂ້ອງໃຈສົງໄສຢູ່ວ່າ ເປັນຫຍັງຈຶ່ງຕ້ອງໃຊ້ຄຳວ່າ "ສາມັກຄີພິເສດ" ແລະ ມັນພິເສດຢູ່ບ່ອນໃດ?

ສຳນັກພິມນັກປະພັນລາວ ຮູ້ສຶກເປັນກຽດ ແລະ ພາກພູມໃຈ ທີ່ໄດ້ຮັບມອບໝາຍ ແລະ ຄວາມໄວ້ວາງໃຈຈາກຄະນະໂຄສະນາອົບຮົມສູນກາງພັກປະຊາຊົນປະຕິວັດລາວ ໃຫ້ເປັນຜູ້ດຳເນີນການຈັດພິມປຶ້ມ ບົດບັນທຶກ ຄວາມຊົງຈຳ ຄວາມສາມັກຄີລາວ-ຫວຽດນາມ ເຫລັ້ມນີ້ ຊຶ່ງເປັນຜົນງານອັນຊົງຄຸນຄ່າຈາກປາຍປາກກາຂອງທ່ານ ພົນຕີ ຊຽງສົມ ກຸນລະວົງ ອະດີດລັດຖະມົນຕີຊ່ວຍວ່າການກະຊວງປ້ອງກັນຄວາມສະຫງົບ

ບົດບັນທຶກນີ້ ໄດ້ຮັບລາງວັນຊະນະເລີດ ໃນບັ້ນກວດສອບທີ່ຊື່ວ່າ: ຊອກຮູ້ປະຫວັດສາດການພົວພັນລາວ-ຫວຽດນາມ, ຫວຽດນາມ-ລາວ ເນື່ອງໃນໂອກາດສະເຫລີມສະຫລອງປີສາມັກຄີມິດຕະພາບລາວ-ຫວຽດນາມ 2012 ຊຶ່ງຈັດຂຶ້ນໂດຍຄະນະໂຄສະນາອົບຮົມສູນກາງພັກປະຊາຊົນປະຕິວັດລາວ ຮ່ວມກັບສະມາຄົມນັກປະພັນລາວ.

ບົດບັນທຶກນີ້ ເປັນຫນຶ່ງໃນຫລາຍໆບົດທີ່ດີເດັ່ນ ຊຶ່ງມີເນື້ອໃນກ່າວຢັ້ງຢືນເຖິງເຫດການ ສະຖານທີ່ ແລະ ບຸກຄົນທີ່ມີຈິງໃນໄລຍະຫນຶ່ງ ຂອງປະຫວັດສາດແຫ່ງການພົວພັນລາວ-ຫວຽດນາມ. ທ່ານ ພົນຕີ ຊຽງສົມ ກຸນລະວົງ ໄດ້ບັນທຶກເອົາຫລາຍເຫດການທີ່ຕໍ່ເນື່ອງກັນເຖິງສອງຮຸ່ນຄົນ ຊຶ່ງເພິ່ນເອງໄດ້ຮູ້ໄດ້ເຫັນ ໄດ້ປະສົບພົບພໍ້ໃນຊີວິດຂອງຕົນ ແລະ ໃນຊີວິດຂອງເພື່ອນສະຫາຍຂອງເພິ່ນ ຊຶ່ງໃນນັ້ນກໍລວມທັງພັນລະຍາຄູ່ຊີວິດຂອງເພິ່ນດ້ວຍ. ເຫດການຕ່າງໆ ທີ່ກ່າວໃນບົດບັນທຶກນີ້ໄດ້ກາຍເປັນອະດີດໄປແລ້ວ ແຕ່ສະຖານທີ່ເຫລົ່ານັ້ນ ຍັງຄົງມີຢູ່ ແລະຫລາຍຄົນກໍຍັງມີຊີວິດຢູ່ໃນປັດຈຸບັນນີ້.

ບົດບັນທຶກນີ້ ອາດເປັນພຽງສ່ວນນ້ອຍໆ ອັນຫນຶ່ງໃນບັນດາຮູບພາບແຫ່ງການພົວພັນອັນຍິ່ງໃຫຍ່ ກວ້າງຂວາງ ເລິກເຊິ່ງ ແລະ ຫລາຍບັ້ນ ຫລາຍຕອນ ຫລາຍເວລາ ຫລາຍສະຖານ

ທີ່ລະຫວ່າງລາວ-ຫວຽດນາມ ແລະ ຫວຽດນາມ-ລາວ ແຕ່ກໍເຊື່ອແນ່ວ່າເມື່ອທ່ານໄດ້ອ່ານບົດບັນທຶກນີ້ແລ້ວ ທ່ານຈະເຫັນເຖິງ "ຄວາມສາມັກຄີພິເສດ" ທີ່ວ່ານັ້ນໄດ້ໃນລະດັບຊາດ ລະດັບການຈັດຕັ້ງ ແລະ ລະດັບບຸກຄົນ.

ສຳນັກພິມນັກປະພັນລາວຂໍສະແດງຄວາມຮູ້ບຸນຄຸນຕໍ່ຄະນະໂຄ ສະນາອົບຮົບສູນກາງພັກ ແລະ ສະມາຄົມນັກປະພັນລາວ ທີ່ໄດ້ຊີ້ນໍາ ແລະ ອໍານວຍໃຫ້ສໍານັກພິມນັກປະພັນລາວ ໄດ້ຈັດພິມປຶ້ມເຫລັ້ມນີ້ຂຶ້ນມາ ປະກອບສ່ວນເຂົ້າໃນຂະບວນການຊອກຮູ້ປະຫວັດສາດການພົວພັນລາວ-ຫວຽດນາມ ໃນຄັ້ງນີ້ ແລະ ຂໍຂອບໃຈທຸກໆທ່ານທີ່ໄດ້ເຮັດໃຫ້ການຈັດພິມປຶ້ມນີ້ສໍາເລັດຕາມລະດັບຄາດຫມາຍ.

ຜູ້ອໍານວຍການ ແລະ ຫົວຫນ້າບັນນາທິການ
ສໍານັກພິມນັກປະພັນລາວ
ຫົງເຫີນ ຊຸນພິທັກ

# ຄຳເຫັນຂອງ
# ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ

ຕະຫລອດໄລຍະແຫ່ງການຕໍ່ສູ້ກູ້ເອກະລາດ ປົດປ່ອຍປະເທດຊາດ ຕ້ານຈັກກະພັດຜູ້ຮຸກຮານ ອັນດຸເດືອດ ຂ້ຽວຂາດ ແລະ ຍາວນານນັ້ນ ສອງພັກ ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ໄດ້ສາມັກຄີກັນຮ່ວມສຳພັນສູ້ຮົບ. ການພົວພັນຊ່ວຍເຫລືອຊຶ່ງກັນ ແລະ ກັນນັ້ນ ມີຫລາຍຮູບແບບ ຫຼາຍລະດັບ ຫຼາຍເຫດການ ຫລາຍສະຖານທີ່ ແຕກຕ່າງກັນ.

ເນື່ອງໃນໂອກາດ ສະເຫລີມສະຫລອງປີສາມັກຄີມິດຕະພາບລາວ-ຫວຽດນາມ 2012 ສອງພັກ ສອງລັດລາວ-ຫວຽດນາມ ໄດ້ຈັດຫລາຍກິດຈະກຳຂຶ້ນເພື່ອໂຄສະນາເຜີຍແຜ່ ແລະ ເພີ່ມພູນຄູນສ້າງນ້ຳໃຈສາມັກຄີມິດຕະພາບນັ້ນ. ຄະນະໂຄສະນາອົບຮົມສູນກາງພັກປະຊາຊົນປະຕິວັດລາວ ຮ່ວມກັບສະມາຄົມນັກປະພັນລາວ ຈຶ່ງໄດ້ຈັດຕັ້ງບັ້ນກວດສອບຂຶ້ນ ໃນຫົວຂໍ້:

ຊອກຮູ້ປະຫວັດສາດການພົວພັນສາມັກຄີພິເສດລາວ-ຫວຽດ ນາມ, ຫວຽດນາມ-ລາວ ໂດຍໄດ້ແບ່ງອອກເປັນສາມປະເພດຄື: ບົດບັນທຶກ, ບົດເລື່ອງສັ້ນ ແລະ ບົດກະວີ.

ໃນບັ້ນກວດສອບນີ້ ພວກເຮົາໄດ້ຮັບບົດບັນທຶກຈຳນວນ 104 ບົດ, ເລື່ອງສັ້ນ 25 ບົດ ແລະ ບົດກະວີ 68 ບົດ ຊຶ່ງເປັນຜົນງານທີ່ສົ່ງມາຈາກສູນກາງ ແລະ ທຸກເຂດແຂວງໃນທົ່ວປະເທດ ເວົ້າສະເພາະບົດບັນທຶກນັ້ນ ສ່ວນໃຫຍ່ເປັນຜົນງານການຂຽນ ແລະ ການເລົ່າຂອງບັນດານັກປະຕິວັດຣຸ່ນອາວຸໂສ ຜູ້ຊຶ່ງໄດ້ຢູ່ ໄດ້ຮູ້ ໄດ້ເຫັນເຫດການ ສະຖານທີ່ ແລະ ບຸກຄົນຕົວຈິງໃນປະຫວັດສາດ.

ບັນດາບົດບັນທຶກເຫລົ່ານັ້ນ ເວົ້າລວມ ລ້ວນແຕ່ເປັນເອກະສານສຳຄັນ ມີຄຸນຄ່າທາງປະຫວັດສາດສູງ ເພາະມັນໄດ້ຢັ້ງຢືນເຫດການຕົວຈິງ ສະຖານທີ່ຈິງ ແລະ ບຸກຄົນຕົວຈິງ ຊຶ່ງສາມາດພິສູດໄດ້ ຜ່ານການກວດກາຂອງຄະນະກຳມະການ ເຫັນວ່າ ມີຫລາຍບົດດີເດັ່ນ ດັ່ງເຊັ່ນບົດບັນທຶກຂອງທ່ານ ພົນຕີ ຊຽງສົມ ກຸນລະວົງ ນັກປະຕິວັດອາວຸໂສ ອະດີດລັດຖະມົນຕີຊ່ວຍວ່າການກະຊວງປ້ອງກັນຄວາມສະຫງົບ ຊຶ່ງໄດ້ຮັບລາງວັນຊະນະເລີດ ແລະ ພວກເຮົາໄດ້ມອບໃຫ້ສຳນັກພິມນັກປະພັນລາວ ໄດ້ຈັດພິມຂຶ້ນນີ້.

ພວກເຮົາຍັງມີບົດບັນທຶກຂອງທ່ານ ນາງ ສົມໝາຍ ແສງວິໄລ ແລະ ທ່ານ ສົມໃຈ ຈັນທະວົງ ຊຶ່ງໄດ້ຮັບລາງວັນທີສອງ ແລະ ບົດບັນທຶກຂອງທ່ານ ສຸດດາລາ ຢາທໍ່ຕູ້, ທ່ານ ຊາຍຄຳ ຈຳປາອຸທຸມ, ທ່ານ ພິນໄຊ ຊົມຊອບ, ທ່ານ ບຸນຍົງ ໄຊປັນຍາ, ທ່ານ ນາງ ພາວອນ ສຸກນະວົງ ແລະ ທ່ານ ພົນຕີ ສຸລິມາ ບຸນເລີດ ຊຶ່ງໄດ້ຮັບລາງວັນທີສາມ ແລະ ບົດບັນທຶກຂອງທ່ານອື່ນໆ ອີກ ຊຶ່ງລ້ວນແຕ່ເປັນຕາອ່ານ ເປັນຕາຊອກຮູ້ຮໍ່າຮຽນ ແລະ ພວກເຮົາຈະໄດ້ຈັດພິມອອກເຜີຍແຜ່ໃນໂອກາດຕໍ່ໄປ.

ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ
ເຈືອງ ສົມບູນຂັນ

24 / VII
ຫ້າມຈຳໜ່າຍ

# ຄຳນຳ
# ຂອງຜູ້ຂຽນ

ໃນໂອກາດສະເຫຼີມສະຫຼອງປີສາມັກຄີມິດຕະພາບລາວ-ຫວຽດນາມ, ຫວຽດນາມ-ລາວ ປີ 2012.

ຂ້າພະເຈົ້າຈຶ່ງໄດ້ຕັດສິນໃຈແບ່ງເວລາຈາກການຂຽນບົດອື່ນໆ ມາວາດຄືນຄວາມຊົງຈຳທີ່ໄລຍະເວລາໜຶ່ງໃນຊີວິດ ຕົນເອງໄດ້ມີໂອກາດເປັນພະຍານປະຫວັດສາດ ຊຶ່ງໄດ້ຮູ້ເຫັນ ແລະ ໄດ້ປະກອບສ່ວນສ້າງຕຳນານແຫ່ງຄວາມສາມັກຄີອັນຍິ່ງໃຫຍ່ຂອງສອງປະເທດທີ່ສະພາບທາງພູມສາດ ແລະ ທາງປະຫວັດສາດ ເຂົ້າຮ່ວມບັ້ນກວດສອບບົດບັນທຶກ ກ່ຽວກັບຄວາມສາມັກຄີແບບພິເສດລະຫວ່າງລາວ-ຫວຽດນາມ ໂດຍແມ່ນຄະນະໂຄສະນາອົບຮົມສູນກາງພັກ, ສະມາຄົມນັກປະພັນລາວ ເປັນຜູ້ຈັດຕັ້ງຂຶ້ນ. ເນື້ອໃນຂອງບົດບັນທຶກນີ້ ແມ່ນຂ້າພະເຈົ້າໄດ້ນຳເອົາຊາຕາກຳຂອງສອງຊາດ-ສອງປະຊາຊົນ ມາຜູກພັນເຂົ້າກັນຢ່າງແໜ້ນແຟ້ນແບບຫາຍາກທີ່ສຸດໃນປະຫວັດສາດແຫ່ງການພົວພັນສາກົນຂອງສັງຄົມມະນຸດ.

ເມື່ອກ່າວເຖິງການພົວພັນທີ່ກາຍມາເປັນຄວາມສາມັກຄີພິເສດ ໃນຄວາມຊົງຈໍາຂອງຂ້າພະເຈົ້າ ແລະ ຄອບຄົວນັ້ນແມ່ນມັນມີລັກສະນະເປັນມູນເຊື້ອສືບເນື່ອງກັນມາ. ສະນັ້ນ, ໃນບົດຂຽນຂອງຂ້າພະເຈົ້າຊຸດນີ້ ຈຶ່ງແບ່ງເນື້ອໃນອອກເປັນ 2 ຕອນຄື: ຕອນທີໜຶ່ງ ແມ່ນໄລຍະການເຄື່ອນໄຫວຂອງຮຸ່ນພໍ່ແມ່, ຕອນທີສອງ ແມ່ນໄລຍະການເຄື່ອນໄຫວຂອງບັນດາລູກ ໃນຕອນທີສອງນີ້ ກໍ່ໄດ້ແບ່ງອອກເປັນ 2 ພາກຕື່ມອີກຄື ພາກທີໜຶ່ງ ເວົ້າເຖິງການເຄື່ອນໄຫວຂອງ ນາງ ອີ ແຜດສິນ ແລະ ພາກທີສອງ ເວົ້າເຖິງການເຄື່ອນໄຫວຂອງຂ້າພະເຈົ້າເອງ ດັ່ງມີເນື້ອໃນລະອຽດຕໍ່ໄປນີ້:



**ພໍ່ທິດດີ ແຜດສິນ**

ນັກປະຕິວັດຮຸ່ນບຸກເບີກ ຢູ່ທົ່ງພຮງວຮງຈັນ



**ແມ່ຄຳເຫຼັກ ຈັນທະລາດ**

ນັກປະຕິວັດຮຸ່ນບຸກເບີກ ຢູ່ທົ່ງພຣງວຣຈັນ

# ຕອນທີໜຶ່ງ

## ໄລຍະການເຄື່ອນໄຫວຂອງ ຣຸ່ນພໍ່ແມ່

ຫວນກັບຄືນເຖິງເຫດການ ເມື່ອຈັກກະພັດລ່າເມືອງຂຶ້ນຝະລັ່ງ ໄດ້ໃຊ້ເຮືອບິນຮົບ, ກຳລັງໄຟ ແລະ ກຳລັງທະຫານຮາບ ເຄື່ອນທັບຂະໜານໃຫຍ່ເຂົ້າບຸກໂຈມຕີຫວັງຢຶດເອົາຕົວເມືອງວຽງຈັນ ແຕ່ວັນທີ 13 ເມສາ 1946 ຈົນມາເຖິງວັນທີ 24 ເມສາ 1946. ພາຍຫຼັງສູ້ຮົບປ້ອງກັນຕົວເມືອງ ແລະ ປ້ອງກັນປະຊາຊົນຢ່າງພິລະອາດຫານມາໄດ້ 6 ເດືອນກວ່າ ກອງທະຫານລາວອິດສະຫຼະ ບວກກັບກອງທະຫານປົດປ່ອຍຊາດ ຂອງຫວຽດນາມຕ່າງດ້າວ ໄດ້ຕັດສິນໃຈສະຫຼະຕົວເມືອງວຽງຈັນ ເພື່ອຮັກສາກຳລັງ. ໃນການຖອນທັບອອກຈາກຕົວເມືອງຄັ້ງນີ້ກອງທະຫານປະສົມດັ່ງກ່າວໄດ້ແບ່ງອອກເປັນ 2 ພາກສ່ວນຄື: ສ່ວນໃຫຍ່ແມ່ນອົບພະຍົບຕິດຕາມຄະນະລັດຖະບານລາວອິດສະຫຼະ ທີ່ໄດ້ໄປຂໍລີ້ໄພຊົ່ວຄາວຢູ່ປະເທດໄທແລ້ວ ແຕ່ວັນທີ 2 ເມສາ ພຸ້ນ, ອີກພາກສ່ວນໜຶ່ງ ໄດ້ພາກັນຄ່ອຍຖອຍອອກຈາກຕົວເມືອງດ້ວຍການເຄື່ອນທັບລົງໄປຕາມເສັ້ນທາງເລກທີ 13 ໃຕ້ ແລ້ວໄດ້ປັກຫຼັກຕັ້ງທ່າຢູ່ເມືອງປາກງື່ມ ເພື່ອປຸກລະດົມກໍ່ສ້າງພື້ນຖານການຕໍ່ສູ້ຢ່າງຍາວນານຕ້ານຈັກກະພັດລ່າຫົວເມືອງຂຶ້ນຝະລັ່ງ ທີ່ເຂົ້າມາຮຸກຮານ ຍຶດຄອງລາວເປັນຫົວເມືອງຂຶ້ນ.

ການກໍ່ສ້າງພື້ນຖານດັ່ງກ່າວ ໄດ້ຂະຫຍາຍຢ່າງໄວວາ ໄປຕາມບ້ານປະຊາຊົນທີ່ຕັ້ງຢູ່ລຽບຕາມຕີນພູເຂົາຄວາຍ ຈົນຮອດເຂດບ້ານເກີນ ແລະ ແຜ່ລາມຂ້າມນ້ຳງືມມາທາງທິດໃຕ້ຂອງເມືອງໂພນໂຮງ ແລະ ກຳລັງກໍ່ສ້າງພື້ນຖານດັ່ງກ່າວຈຳນວນໜຶ່ງ ໄດ້ເຄື່ອນໄຫວຂ້າມພູພະນັງ ໄປຫາເຂດລ້ອງຕອນ ລາມໄປຫາເຂດນ້ຳສັງ ແລະ ເລີຍຂຶ້ນໄປເຖິງເຂດເມືອງເຟືອງ...



*ພໍ່ທິດດີ ຮ່ວມພາເຂົ້າສາມັກຄີກັບປະຊາຊົນ ແລະ ນັກຮົບອິດສະຫຼະ ໃນປ່າແຫ່ງໜຶ່ງ ຢູ່ເຂດທົ່ງພຽງວຽງຈັນ ຊຸມປີ 1954 (ຮູບພາບຈາກສະຫາຍ ເຈີນ ວັນ ຖ້ຽວ ອະດີດນັກຮົບກອງ 83 ວຽງຈັນ)*

ໃນຂະບວນການກໍ່ສ້າງພື້ນຖານດັ່ງກ່າວ ແມ່ນມີກໍາລັງຈໍານວນໜຶ່ງໄດ້ມາປັກຫຼັກປຸກລຸກຂົນຂວາຍ ກໍ່ສ້າງພື້ນຖານຢູ່ຕາແສງບ້ານຊ້າງ (ບ້ານທ່າດິນແດງ ໃນປະຈຸບັນ) ໂດຍອາໄສປ່າຮົກ ດົງໜາແຖບບ້ານນາໂງມ, ນາຕານ, ນາຄັນທຸງ, ທ່າກົກໄຮ, ຊຽງແລ, ທ່າຊຽງແລນາ, ເວີນກະເບົາ, ໂຄກຈັກຈັ່ນ ເປັນບ່ອນຕັ້ງສໍານັກ.

ໃນເວລານັ້ນ ໄດ້ມີປະຊາຊົນຫຼາຍຄົນທີ່ຕື່ນຕົວອອກເຮັດການປະຕິວັດຮ່ວມກັບຂະບວນການກໍ່ສ້າງພື້ນຖານດັ່ງກ່າວ. ສະເພາະຢູ່ຟາກນໍ້າງື່ມເບື້ອງທາງເລກທີ 13 ໃຕ້ ຂອງວຽງຈັນ ແມ່ນມີພໍ່ທິດດີ ແຜດສິນ ຊຶ່ງເປັນປະຊາຊົນບ້ານນາພອກ ໄດ້ເປັນຜູ້ທໍາອິດທີ່ຂ້າມນໍ້າງື່ມໄປຟາກເບື້ອງເໜືອ (ເບື້ອງຕີນພູເຂົາຄວາຍ) ເພື່ອເຂົ້າຮ່ວມຂະບວນການປະຕິວັດແລ້ວເພິ່ນໄດ້ນໍາເອົາພະນັກງານລາວ ແລະ ຫວຽດນາມ ຈໍານວນໜຶ່ງ ຂ້າມນໍ້າງື່ມມາຕັ້ງສໍານັກໃຫຍ່ຂອງແນວລາວອິດສະຫຼະ ຢູ່ໜອງແສນຕໍ ຊຶ່ງແມ່ນໃຈກາງດົງໃຫຍ່ນາພອກ (ປະຈຸບັນແມ່ນກະໂຕສູນລ້ຽງງົວພັນນົມ ທົ່ງຮາບນາບົງ).

ໃນຈໍານວນພະນັກງານຫວຽດນາມດັ່ງກ່າວແມ່ນມີພໍ່ອົງເອີນ, ພໍ່ອົງຢຸງ, ພໍ່ອົງຮຸ່ງ (ເມື່ອປີ 1967 ເວລາ ທີ່ຂ້າພະເຈົ້າໄດ້ໄປນະຄອນຫຼວງຮ່າໂນ້ຍ ກໍ່ຍັງໄດ້ພົບເຫັນພວກເພິ່ນທັງສາມເຮັດໜ້າທີ່ເປັນຊ່ຽວຊານຢູ່ຫ້ອງການ 98. ຫ້ອງການ 98 ແມ່ນຫ້ອງຕາງໜ້າແນວລາວຮັກຊາດ).

ໃນເບື້ອງຕົ້ນ ການມາຕັ້ງສໍານັກຢູ່ດົງໃຫຍ່ນາພອກ ແມ່ນປິດລັບທີ່ສຸດ ມີພຽງແຕ່ຄອບຄົວຂອງ ພໍ່ທິດດີເທົ່ານັ້ນທີ່ຮູ້ເລື່ອງລາວ ການມາດັ່ງກ່າວ; ໂດຍສະເພາະແມ່ນ ມີແຕ່ ແມ່ຄໍາເຫຼັກ ຈັນທາລາດ (ຜູ້ເປັນພັນລະຍາຂອງ ພໍ່ທິດດີ) ທີ່ໄດ້ຮັບການຕິດຕໍ່ ແລະ ເພິ່ນກໍ່ເປັນຜູ້ດຽວເທົ່ານັ້ນທີ່ໄດ້ກ້າຫານລັກລອບເອົາເຂົ້າປາອາຫານເຂົ້າໄປລ້ຽງດູບັນດາພະນັກງານໃນສໍານັກລັບດັ່ງກ່າວ. ການພົວພັນກັນແມ່ນໄດ້ມີວິ

ທີ່ປົກປິດຄວາມຈິງ ເຊັ່ນວ່າ ໃນບາງຄັ້ງຄາວ ພະນັກງານຫວຽດນາມ ທັງສາມຄົນຕ້ອງໄດ້ເຂົ້າໄປເຄື່ອນໄຫວຢູ່ໃນບ້ານນາພອກ ແມ່ຄຳເຫຼັກ ແລະ ພໍ່ທິດດີ ກໍ່ໄດ້ອ້າງວ່າ ແມ່ນພີ່ນ້ອງຈາກໃນເມືອງມາຢ້ຽມຢາມ ເພາະວ່າພໍ່ທິດດີເອງກໍ່ແມ່ນຄົນບ້ານຊຽງຫວາງ, ອຳເພີເພັນ, ຈັງຫວັດອຸດອນ ປະເທດໄທ ແຕ່ໄດ້ມາທຳມາຫາກິນ ແລ້ວສ້າງຄອບຄົວຢູ່ບ້ານນາພອກນີ້ ສະນັ້ນຈຶ່ງເປັນເລື່ອງທຳມະດາ ທີ່ມີພີ່ນ້ອງທາງໄກມາເຮືອນ ແລະ ທີ່ສຳຄັນແມ່ນ ບັນດາສະຫາຍຫວຽດນາມທັງສາມ ມີສຳນຽງຄວາມເວົ້າແບບໄທອີສານອ້ອຍຕ້ອຍ ຈຶ່ງບໍ່ມີໃຜສົງໄສຕື່ມອີກ ທັງນີ້ກໍ່ຍ້ອນວ່າ ໃນເບື້ອງຕົ້ນນັ້ນ ພໍ່ແມ່ປະຊາຊົນເຂດອ້ອມແອ້ມດົງໃຫຍ່ນາພອກ ເຊັ່ນ ບ້ານນາພອກ, ປາກຊາບ, ທ່າດອກຄຳ, ດົງບັງ, ນາມົນ ແລະ ທ່ານາກ ຍັງບໍ່ທັນໄດ້ຖືກປຸກລະດົມຂົນຂວາຍ ໃຫ້ຕື່ນຕົວເຂົ້າຮ່ວມເປັນພື້ນຖານການປະຕິວັດເທື່ອ.

ຕໍ່ມາພວກພໍ່ທັງສີ່ ໄດ້ຮຽກເອົາພະນັກງານປຸກລຸກໂຄສະນາກໍ່ສ້າງຮາກຖານ ຈາກຟາກງື່ມເບື້ອງເໜືອມາເພີ່ມອີກຊຶ່ງ ມີທັງພະນັກງານລາວ ແລະ ພະນັກງານຫວຽດນາມ ມີທັງພະນັກງານຍິງ ແລະ ພະນັກງານຊາຍຫຼາຍຄົນ. ເທົ່າທີ່ຍັງເຫຼືອຄ້າງຢູ່ໃນຄວາມຊົງຈຳຂອງຂ້າພະເຈົ້າ ບັນດາພະນັກງານໂຄສະນາປຸກລຸກຂົນຂວາຍ ຊຸດທຳອິດນັ້ນ ຝ່າຍຫວຽດນາມແມ່ນມີ: ສະຫາຍ ເລີມ ຊຶ່ງມີຊື່ເປັນພາສາລາວວ່າ ສະຫາຍ ສະຫາງຮົມ, ສະຫາຍ ໄນ້ (ຫຼື ສະຫາຍ ທອງດີ), ສະຫາຍ ດັ້ງ ຊຶ່ງມີຊື່ລາວວ່າ ສະຫາຍ ວິໄຊ, ສະຫາຍ ທວານ ຊຶ່ງມີຊື່ລາວວ່າ ສະຫາຍ ບຸນໄທ, ສະຫາຍ ເຮືອງ ຊຶ່ງມີຊື່ລາວວ່າ ສະຫາຍ ບຸນທັນ, ສະຫາຍ ຂານ ຊຶ່ງມີຊື່ລາວວ່າ ສະຫາຍ ແສງຈັນ, ສະຫາຍ ດິ່ງ (ເປັນລູກຮັກຂອງ ແມ່ຄຳເຫຼັກ ແລະ ທັງເປັນທະຫານປ້ອງກັນໃກ້ຊິດຂອງ ພໍ່ທິດດີ), ສະຫາຍ ແຊ້ງ ຊຶ່ງມີຊື່ລາວວ່າ ສະຫາຍ ຂັນ, ສະຫາຍ ເຟືອງ ຊຶ່ງມີຊື່ລາວວ່າ ສະຫາຍ ສົມບູນ, ສະຫາຍ ລິກ ຊຶ່ງມີຊື່ລາວວ່າ

ສະຫາຍ ສົມນຶກ (ເປັນທະຫານເສນາຮັກ ຈົນເຖິງປະຈຸບັນເພິ່ນຍັງປະກອບອາຊີບເປັນແພດປິ່ນປົວຄົນເຈັບຢູ່ບ້ານເກີດຂອງເພິ່ນ), ສະຫາຍນິງ ມີຊື່ລາວວ່າ ສະຫາຍຄຳຕັນ, ສະຫາຍລາມເຊີນ, ສະຫາຍດາຍເຊີນ (ມີຮູບຮ່າງໜ້າຕາຄືກັບຄົນຝະລັ່ງ ອ້ອຍຕ້ອຍ), ສະຫາຍໝີ ຊຶ່ງມີຊື່ລາວວ່າສະຫາຍບຸນມີ, ສະຫາຍທົ່ງ, ສະຫາຍຢຸງ, ສະຫາຍກີ, ສະຫາຍຮ່ານ, ສະຫາຍຕຶ໊, ສະຫາຍບຸນຊູ, ສະຫາຍຄຳ, ສະຫາຍລ້ອງ, ສະຫາຍຕຽນ, ສະຫາຍເຊີນ, ສະຫາຍຄ່າຍ ແລະ ສະຫາຍອື່ນໆອີກ ...

ສ່ວນພະນັກງານເພດຍິງ ຝ່າຍລາວແມ່ນມີ: ນາງຜອງ, ນາງໝູທອງ, ຝ່າຍຫວຽດນາມ ແມ່ນມີ: ນາງຮວາ, ນາງຫວັນ (ຫຼື ນາງບໍລິວັນ), ນາງຕຸ (ຫຼື ນາງມະນີວັນ), ນາງເທິມ (ຫຼື ນາງວິໄລວັນ).





*ບາງໃບໜ້າຂອງນັກຮົບອາສາສະໝັກກອງ 83 ວຽງຈັນ ທີ່ມາຢູ່ນຳ ພໍ່ທິດດີ ແລະ ແມ່ຄຳເຫລັກ ໃນໄລຍະຕໍ່ສູ້ຂັບໄລ່ຈັກກະພັດຝະລັ່ງ*

*ຮູບທີ1: ສະຫາຍບຸນມີ (ຢູ່ທາງໜ້າ), ສະຫາຍດົ່ງ (ຢູ່ທາງກາງ)*
*ຮູບທີ2: ສະຫາຍຄຳຕັນ (ຢູ່ຂວາສຸດເບື້ອງລຸ່ມ)*

ຜ່ານການເຄື່ອນໄຫວປຸກລະດົມຂົນຂວາຍຢູ່ຟາກງື່ມກ້ຳນີ້ ຕັ້ງແຕ່ຊຸມປີ 1950 ເຖິງຊຸມປີ 1954 ໄດ້ເຮັດໃຫ້ປະຊາຊົນໃນບັນດາບ້ານອ້ອມແອ້ມດົງໃຫຍ່ນາພອກ ກາຍມາເປັນພື້ນຖານປະຕິວັດ ທີ່ໜັກແໜ້ນເປັນແກ່ນສານໂດຍສະເພາະແມ່ນ ບ້ານນາພອກ, ບ້ານປາກຊາບ, ບ້ານທ່າດອກຄຳ, ບ້ານດົງບັງ, ບ້ານນາມົນ ແລະ ບ້ານທ່ານາກ. ພິເສດນັ້ນ ບ້ານທີ່ເປັນພື້ນຖານແໜ້ນແກ່ນກວ່າໝູ່ແມ່ນບ້ານນາພອກ ແລະ ບ້ານປາກຊາບ ທີ່ຖືກສັດຕູຂະໜານນາມໃຫ້ດ້ວຍຄວາມໂກດແຄ້ນວ່າແມ່ນ "ບ້ານອິດສະຫຼະ".

ດ້ວຍເຫດນັ້ນ ຈຶ່ງມີຊາວໜຸ່ມຊາຍສະກັນຈາກບັນດາບ້ານດັ່ງກ່າວ ສະໝັກໃຈສະຫຼະຄອບຄົວ ອອກເຮັດການປະຕິວັດຕາມຮອຍບັນດານັກປະຕິວັດຮຸ່ນບຸກເບີກ ເປັນຈຳນວນນັບມື້ນັບຫຼາຍຂຶ້ນ ໃນນັ້ນ ກໍ່ໄດ້ມີຫຼາຍສະຫາຍ ມີຄວາມກ້າວໜ້າກາຍເປັນພະນັກງານຫຼັກແຫຼ່ງໃນເຂດດັ່ງກ່າວ ເຊັ່ນ: ສະຫາຍພໍ່ເໝືອນ ຄົນບ້ານດົງບັງ (ຊຶ່ງເປັນສ່ຽວຮັກສ່ຽວແພງຂອງ ພໍ່ທິດດີ). ເມື່ອມີກຳລັງນັກປະຕິວັດນັບມື້ ນັບເພີ່ມຂຶ້ນ ຈຶ່ງມີຄວາມຈຳເປັນຕ້ອງໄດ້ສ້າງຕັ້ງບັນດາສຳນັກຍ່ອຍຂຶ້ນຕື່ມຫຼາຍແຫ່ງ ເຊັ່ນ: ສຳນັກຫ້ວຍສົ້ມ ແມ່ນເປັນຄ້າຍທະຫານ, ສຳນັກຫ້ວຍອີໂກນ ແມ່ນເປັນຄ້າຍທະຫານຊ່າງແສງ ແລະ ຍຸດໂທ ທີ່ປະດິດ ແລະ ສ້ອມແປງອາວຸດ ແລະ ທັງເປັນສາງອາວຸດ, ສຳນັກຫ້ວຍຊຳບ້າງ (ປະຈຸບັນແມ່ນກະໂຕທີ່ຕັ້ງຂອງຄະນະກະເສດສາດ ມະຫາວິທະຍາໄລກະເສດແຫ່ງຊາດ) ແມ່ນເປັນຄ້າຍຂອງໜ່ວຍໂຄສະນາປຸກລຸກຂົນຂວາຍປະກອບອາວຸດ.

ແລະ ໃນເມື່ອມີຜູ້ສະໝັກອອກເຮັດການປະຕິວັດເພີ່ມຈຳນວນຂຶ້ນເກີນຄວາມສາມາດຮອງຮັບເອົາຢູ່ຟາກງື່ມເບື້ອງນີ້ ພວກເພິ່ນກໍ່ໄດ້ສົ່ງກຳລັງດັ່ງກ່າວບາງສ່ວນໄປເປັນທະຫານເມືອງ ຊຶ່ງມີທີ່ຕັ້ງຢູ່ຟາກງື່ມເບື້ອງນັ້ນ ໂດຍມີກອງທະຫານຫຼວງອາສາສະໝັກຫວຽດນາມ

(ຫຼືກອງທະຫານປົດປ່ອຍຊາດຂອງຊາວຫວຽດນາມຕ່າງດ້າວ) ຈາກ "ກອງ 83 ວຽງຈັນ" ຈຳນວນ 1 ກອງຮ້ອຍສົມທົບກັນເຄື່ອນໄຫວຕີສັດຕູຢູ່ຂອບເຂດບໍລິເວນດັ່ງກ່າວ ອັນປະກອບມີ: ເມືອງໄຊທານີ, ເມືອງປາກງື່ມ, ເມືອງທຸລະຄົມ, ທາງທິດໃຕ້ ແມ່ນລົງໄປຈົນຮອດເມືອງປາກຊັນ, ທາງທິດຕາເວັນອອກສຽງເໜືອແມ່ນກວມໄປຮອດເມືອງລ່ອງຊານ ເຂດຜາລະແວກ ຊຶ່ງໃນເວລານັ້ນ ເພິ່ນກຳນົດເຂດດັ່ງກ່າວວ່າເປັນເມືອງໜຶ່ງໃນກົງຈັກການປົກຄອງປະຕິວັດ ແລະ ໃສ່ຊື່ວ່າ "ເມືອງທຸລະຄົມໃຕ້ສຳນັກ 80" (ຊຶ່ງຕໍ່ມາເຖິງປີ 1955 ຈຶ່ງປ່ຽນມາເປັນເມືອງວຽງຈັນໃຕ້) ໂດຍແມ່ນ ພໍ່ທິດດີ ເປັນປະທານເມືອງ ແລະ ມີພໍ່ຄຳອອນ ຫຼື ຈານວັນ ຄົນບ້ານນາຕານ ເປັນຮອງ, ພ້ອມທັງມີຄະນະຈຳນວນໜຶ່ງຄື: ພໍ່ເໜືອນ ຄົນບ້ານດົງບັງ, ພໍ່ບົວແດງ ຄົນບ້ານທ່າດອກຄຳ, ພໍ່ແສນ, ພໍ່ສົມ, ພໍ່ໄພສານ ທັງໝົດເປັນຄົນບ້ານນາຕານ. ຊຶ່ງໃນເວລານັ້ນ ພໍ່ທິດດີ, ພໍ່ອົງເອີນ, ພໍ່ອົງຮຸ່ງ, ພໍ່ອົງຢຸງ ແລະ ພໍ່ອົງເລີມ ຍັງປະຈຳຢູ່ສຳນັກໃຫຍ່ ຕັ້ງຢູ່ດົງໃຫຍ່ ນາພອກ ຊຶ່ງນອກຈາກຈະເປັນສຳນັກຂອງເມືອງທຸລະຄົມໃຕ້ແລ້ວ ຍັງເປັນສຳນັກບ່ອນອີງທີ່ສຳຄັນໃນການສ້າງສາຍລັບປະຕິວັດ ສົ່ງເຂົ້າເຄື່ອນໄຫວຢູ່ຕົວເມືອງວຽງຈັນ, ໃນການສ້າງລະບົບສາຍໄຍສາຍລັບປະຕິວັດ ຢູ່ໃນຕົວເມືອງວຽງຈັນ ແລະ ສ້າງເປັນລະບົບສາຍໃຍຂອງສາຍລັບປະຕິວັດ ເຊື່ອມຕໍ່ໄປຟາກນ້ຳຂອງ ເບື້ອງປະເທດໄທ ຫາບັນດາພື້ນຖານປະຕິວັດຊາວຫວຽດນາມຕ່າງດ້າວ ທີ່ດຳລົງຊີວິດຢູ່ຟາກຂອງເບື້ອງນັ້ນ ເພາະເຂົາເຈົ້າສ່ວນຫຼາຍກໍ່ແມ່ນຄອບຄົວ ຫຼືຍາດພີ່ນ້ອງຂອງບັນດາພະນັກງານນັກຮົບ ກອງອາສາສະໝັກຫວຽດນາມ ທີ່ມາຮ່ວມເຄື່ອນໄຫວນຳພວກເຮົາໃນເຂດນີ້.

ໜຶ່ງໃນຈຳນວນສາຍລັບປະຕິວັດດັ່ງກ່າວ ກໍ່ມີແມ່ຄຳເຫຼັກ ຊຶ່ງເພິ່ນໄດ້ອາໄສເງື່ອນໄຂທີ່ວ່າ ເພິ່ນເປັນລູກໃພ້ຂອງໄທຟາກຂອງກໍ້

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ